# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 25 ຕຸລາ 2009 (10-25-2009)

## ວີຣະຊົນຜູ້ມີໄຊຊະນະ

**ຂໍ້ພຣະຄັມພີໃນບົດຮຽນ**: ມາຣະໂກ 15:1-5, 12-13, 32, 37-39; 16:1, 5-7

**ຜົນສະທ້ອນຕໍ່ຊີວິດ**

ບົດຮຽນນີ້ຈະໃຫ້ຄວາມໝັ້ນໃຈແກ່ທ່ານວ່າ ເຖິງແມ່ນວ່າຈະພົບກັບສິ່ງທີ່ຊົ່ວຮ້າຍຫລືເໝືອນກັບວ່າຈະຫຼົ້ມຈົມ ທ່ານຍັງສາມາດປະສົບກັບໄຊຊະນະໄດ້.

**ເປົ້າໝາຍຂອງບົດຮຽນ**

ບົດຮຽນນີ້ສະແດງໃຫ້ເຫັນໄຊຊະນະແຫ່ງການຄືນພຣະຊົນຂອງພຣະເຢຊູ

**ຄວາມສຳຄັນຂອງບົດຮຽນ**

ເຖິງແມ່ນວ່າການເສັຍໄຊເບິ່ງຄືຈະຫລີກບໍ່ໄດ້, ດ້ວຍພະລັງອຳນາດຂອງພຣະເຈົ້າ, ສາວົກຜູ້ຊື່ສັດຈະຕ້ອງປະສົບກັບໄຊຊະນະ. ການດຳເນີນຊີວິດຝ່າຍວິນຍານມຸ້ງໜ້າຕໍ່ຈາກການເສັຽໄຊ ແລະການຕາຍທີ່ຫລີກບໍ່ໄດ້ເຂົ້າສູ່ໄຊຊະນະຂອງການຄືນພຣະຊົນ.

**ການສຶກສາພຣະຄັມພີ**

ທ່ານ ດີທຣິກ ບອນຮອບເຟີ ເປັນສິດຍາພິບານຄົນເຢັຍຣະມັນ ທີ່ຕໍ່ຕ້ານກັບລັດທິ ນາຊີ ໂຈມຕີສິດທິມະນຸສທັມແລະສິດເສຣີພາບທາງສາສນາ. ຢູ່ອ້ອມຮອບລາວ, ຄົນທັງຫລາຍຖືກບັງຄັບໃຫ້ຍອມຈຳນົນຂຶ້ນກັບຜູ້ມີອຳນາດ ຫຼືຮັບໂທດກັກຂັງ ຫຼືຖືກປະຫານຊີວິດ. ມີເພື່ອນບາງຄົນໄດ້ຊ່ວຍໃຫ້ທ່ານບອນຮອບເຟີລັກໜີອອກຈາກ ເຢັຍຣະມັນໄປຫາເສຣີພາບໃນສະຫະຣັດ. ລາວໄດ້ມາເຖິງສະຫະຣັຖອະເມຣິກາແຕ່ບໍ່ໄດ້ອາສັຍຢູ່. ລາວໄດ້ກັບຄືນ ໄປປະເທດເຢັຍຣະມັນແລະໄດ້ພົບກັບການຂົ່ມຂູ່, ຂົ່ມເຫັງ, ລົງໂທດ, ແລະຜົນສຸດທ້າຍກໍຖືກຂ້າຕາຍ. ທ່ານ ບອນຮອບເຟີ ມີຄວາມກ້າຫານແລະຄວາມສູ້ທົນເພື່ອຢືນສູ້ສຳລັບຄົນທີ່ລາວຮັກແລະພຣະເຈົ້າທີ່ລາວຮັບໃຊ້ ເຖິງຈະມີຫຍັງເກີດຂຶ້ນກໍຕາມ.

ໃນຊົ່ວໂມງໂຫດຮ້າຍທີ່ສຸດໃນການຮັບໃຊ້ຂອງພຣະເຢຊູໃນໂລກ, ພຣະອົງຊົງຢືນຢັດຕັ້ງທ່ຽງໃນຂນະທີ່ພຣະອົງຊົງຫັນໜ້າສູ້ກັບຄວາມຕາຍແລະໄດ້ເອົາຊະນະມັນ. ຜ່ານທາງຄວາມເຊື່ອໃນພຣະອົງ, ພວກເຮົາສາມາດຢືນຈັ້ງຢ່າງໝັ້ນຄົງ ແລະມີຊີວິດດ້ວຍຄວາມໝັ້ນໃຈເພາະວ່າພຣະເຢຊູຊົງມີໄຊຊະນະຕໍ່ຄວາມຕາຍ, ພວກເຮົາສາມາດປະສົບກັບໄຊຊະນະຂອງຊີວິດນິຣັນດອນ.

**1. <u>ຢືນຢູ່ຢ່າງສູງສົ່ງ</u>**: ມາຣະໂກ 15:1-5

ພຣະເຢຊູຫາກໍໄດ້ຜ່ານກັບກາງຄືນອັນມືດມົນຂອງການທໍຣະຍົດ, ຖືກຈັບ, ຫາເຣື່ອງຜິດໃສ່, ແລະຄວາມ

ຍຸດຕິທັມອັນຈອມປອມ. ຄັນເຖິງຕອນເຊົ້າມາ, ພວກສັດຕຣູຂອງພຣະອົງກໍໄດ້ເຂົ້າພົບກັບບັນດາສະມາຊິກສະພາ ແລະວາງແຜນເພື່ອທຳລາຍພຣະເຢຊູ. ພວກເຂົາໄດ້ມອບພຣະເຢຊູໃຫ້ເຈົ້າແຂວງໂຣມັນຊື່ປີລາດ. ຄຳຖາມຂອງທ່ານປີລາດທີ່ສອບສວນພຣະເຢຊູເປີດເຜີຍໃຫ້ເຫັນຂໍ້ຕ້ອງຫາຂອງພວກສັດຕຣູຂອງພຣະເຢຊູທີ່ໄດ້ກໍ່ຂຶ້ນຕໍ່ສູ້ກັບພຣະອົງ, *"ເຈົ້າເປັນກະສັດຂອງພວກຢິວຫຼື?"* ພຣະເຢຊູບໍ່ຊົງຕອບເພື່ອປ້ອງກັນພຣະອົງ ຫຼືໂຈມຕີພວກສັດຕຣູ. ພຣະອົງມີແຕ່ຕອບຄືນ, "ທ່ານເວົ້ານັ້ນຖືກແລ້ວ." ພຣະເຢຊູຊົງຢືນຢ່າງໝັ້ນຄົງເພື່ອໄພ່ພົນທີ່ພຣະອົງຊົງຮັກແລະພຣະເຈົ້າຜູ້ທີ່ພຣະອົງຊົງໃຊ້ມາເພື່ອຮັບໃຊ້.

ເວລາຄວາມເຊື່ອຂອງເຮົາມີຄວາມກົດດັນ, ພວກເຮົາກໍຖືກດຶງໃຫ້ຍອມເດີນໄປກັບການຮຽກຮ້ອງຂອງສຽງສອນຫລາຍ ຫຼືຫລີກໜີຈາກຄວາມທຸກທົນໃຫ້ໝັ້ນຄົງກັບຄວາມເຊື່ອ. ພຣະເຢຊູຊົງສະແດງໃຫ້ເຮົາເຫັນວ່າຊັຍຊະນະອັນແທ້ຈິງມາເຖິງເຮົາໃນເວລາທີ່ເຮົາອົດທົນຕັ້ງໝັ້ນຢູ່ເຖິງວ່າຈະມີຫຍັງເກີດຂຶ້ນກໍຕາມ. ພຣະຄຳຂອງພຣະເຈົ້າບໍ່ຄວນເອົາມາຖົກຖຽງກັນໃນສານ, ພວກເຮົາບໍ່ມີຄຳຕອບໃຫ້ຄຳຖາມທຸກຂໍ້ທີ່ກ່າວຫາຕໍ່ສູ້ພຣະຄຣິດ. ບາງຄັ້ງພວກເຮົາກໍເໝືອນກັນກັບພຣະເຢຊູ, ມິດຢູ່ກໍສລາດກວ່າ ແລະປ່ອຍໃຫ້ຜູ້ທີ່ຕໍ່ຕ້ານຄວາມເຊື່ອຂອງເຮົາເວົ້າໄປໃຫ້ພໍຈົນເຂົາເປີດເຜີຍຄວາມໃນໃຈແລະມີຄວາມຕ້ອງການພຣະເຢຊູດ້ວຍຕົວຂອງເຂົາເອງ.

## 2. <u>ຢືນຢູ່ຄົນດຽວ</u>: ມາຣະໂກ 15:12-13, 32

ທ່ານປີລາດບໍ່ຮູ້ຈັກຈະເຮັດແນວໃດກັບພຣະເຢຊູ, ທ່ານພະຍາຍາມໂຍນການຕັດສິນໃຫ້ກັບຝູງຊົນ. ເພາະວ່າເຖິງເທສການບຸນມາເຖິງແລ້ວ, ທ່ານປີລາດສເນີວ່າຈະປ່ອຍນັກໂທດຕາມການເລືອກຂອງຝູງຊົນ--ພຣະເຢຊູ ຫຼືບາຣະບາ ສັດຕຣູຊື່ດັງຂອງກຸງໂຣມ.

ພວກເຮົາບໍ່ສາມາດຢັ່ງຮູ້ວ່າພຣະເຢຊູຊົງກຳລັງຄິດຫຍັງຢູ່ໃນເວລາທີ່ພຣະອົງຊົງຢືນຕໍ່ໜ້າຝູງຊົນ, ແຕ່ຂ້າພະເຈົ້າຢາກຮູ້ຖ້າວ່າພຣະອົງກຳລັງກະທຳໃນເວລານັ້ນຢືນຢູ່ຄົນດຽວ ຄິດເຖິງວິທີທີ່ພຣະອົງກຳລັງດຳເນີນງານທີ່ຈະຊ່ວຍໂລກໃຫ້ພົ້ນຈາກຄວາມບາບ. ສີ່ຫ້າວັນກ່ອນນັ້ນ, ຜູ້ຄົນທັງຫລາຍໄດ້ຕ້ອນຮັບເອົາພຣະອົງເຂົ້າກຸງເຢຣູຊາເລັມດ້ວຍການເອົາງ່າຕານປູທົບທາງ ແລະຮ້ອງໂຮສັຣເສີນພຣະເຈົ້າ (ມຣກ 11:1-11). ເວລານີ້ບາງຄົນໃນພວກດຽວກັນນັ້ນເພ່ງເບິ່ງພຣະເຢຊູແລະຮ້ອງຂຶ້ນວ່າ, "ຄຶງມັນໄວ້ທີ່ໄມ້ກາງແຂນ!"

ໃນຊົ່ວໂມງກ່ອນທີ່ຜ່ານມານັ້ນ, ສາວົກຂອງພຣະເຢຊູໄດ້ສັນຍາວ່າຈະຢືນຢູ່ຄຽງຂ້າງກັບພຣະອົງເຖິງຈະມີຫຍັງເກີດຂຶ້ນກໍຕາມ, ແຕ່ເວລານີ້ພຣະອົງຊົງຢືນຢູ່ຕົວຄົນດຽວໃນຂນະທີ່ພວກເຂົາລີ້ຊ່ອນຕົວຢູ່ເພາະວ່າຢ້ານພວກທະຫານໂຣມັນ. ພຣະເຢຊູຊົງສັດຊື່ຕໍ່ວຽກການທີ່ຈະຊ່ວຍໂລກໃຫ້ພົ້ນ ເຖິງແມ່ນຄວາມຈົງຮັກພັກດີແລະຄວາມຮັກຖືກທົດສອບດ້ວຍການຢືນຢູ່ຢ່າງໂດດດ່ຽວ. ເຖິງແມ່ນຢູ່ເທິງໄມ້ກາງແຂນ, ເວລາທີ່ຝູງຊົນແລະຜູ້ທີ່ຖືກຄຶງກັບພຣະອົງເຍາະເຍີ້ຍພຣະອົງ, ພຣະອົງກໍຍັງຊົງຕັ້ງໝັ້ນຄົງຢູ່.

ພວກຊາວຄຣິສຕຽນຖືກຮຽກເອີ້ນໃຫ້ຕຽມການປູກແລະຊຸກຍູ້ການອຸດໜູນ ແລະການເລົ້າໂລມໃຈຄົນອື່ນໆ ທີ່ເຊື່ອພຣະເຈົ້າ. ພວກເຮົາຕ້ອງສວຍເອົາທຸກໆໂອກາດທີ່ມີເພື່ອເສີມສ້າງພະລັງແຫ່ງຄວາມເປັນເພື່ອນແລະຄວາມສັມພັນທີ່ຊ່ວຍຜູກພັນໃຫ້ເຂົ້າຫາກັນ. ໃນເວລາແຫ່ງການທົດສອບ, ພວກເຮົາຕ້ອງຢືນຢູ່ຮ່ວມກັນໃນນາມແຫ່ງພຣະກາຍຂອງພຣະຄຣິດທຸກໆຄັ້ງທີ່ເຮົາສາມາດເຮັດໄດ້. ແຕ່ວ່າບາງຄັ້ງພວກເຮົາກໍເໝືອນກັນກັບພຣະເຢຊູທີ່ຕ້ອງຢືນສູ້ຢູ່ຄົນດຽວ, ພວກເພື່ອນຂອງເຮົາກໍບໍ່ໄດ້ຕັ້ງໃຈຈະປະຖິ້ມເຮົາດອກ ເຮົາອາດຈະຊອກຫາເຂົາບໍ່ເຫັນ. ພວກເຮົາຕ້ອງຈື່ຈຳຕົວຢ່າງທີ່ພຣະເຢຊູຊົງປະທານໄວ້ໃຫ້ເຮົາ ພວກເຮົາຕ້ອງຈື່ຈຳໄວ້ວ່າຄວາມຮັກທີ່ເຮົາມີໄວ້ກັບພຣະອົງ ແລະຄວາມຈົງຮັກ

ພັກດີທີ່ເຮົາມີຕໍ່ວຽກງານຂອງພຣະອົງນັ້ນຈະສູ້ກັບການທົດສອບອັນຍາກລຳບາກທີ່ສຸດໃນເວລາທີ່ເຮົາຕ້ອງຢືນສູ້ຢູ່ຄົນດຽວ.

**3. <u>ຢືນຢູ່ຢ່າງອັສຈັນ</u>**: ມາຣະໂກ 15:37-39

ຄັ້ງນຶ່ງ ຂ້າພະເຈົ້າເຫັນຊາຍຄົນນຶ່ງຮ້ອງເພງຢູ່ໃນລາຍການແຂ່ງຂັນຄວາມສາມາດໃນໂທຣະທັດ. ຕອນລາວເລີ້ມຕົ້ນຮ້ອງເພງຜູ້ຟັງບໍ່ມັກລາວຈັກໜ້ອຍເລີຍ, ມີຫລາຍຄົນຍົກຕີນໃສ່ແລະຮ້ອງໂຮໃສ່ບອກໃຫ້ລາວລົງຈາກເວທີ. ແຕ່ລາວບໍ່ຍອມຢຸດຮ້ອງເພງເຖິງແມ່ນພວກເຂົາຈະເຮັດແນວໃດກໍຕາມ, ລາວດຳເນີນຕໍ່ເພື່ອແບ່ງປັນເນື້ອເພງແລະສຽງເພງທີ່ລາວໄດ້ຕຽມມາແລ້ວ. ກ່ອນລາວຈະຈົບ, ການຮ້ອງເພງໄດ້ປ່ຽນສຽງຈົ່ມຂອງຝູງຊົນກາຍເປັນສຽງສັຣເສີນແລະການເບື່ອໜ່າຍເປັນການຕົບມືໃຫ້. ຄວາມຕັ້ງໃຈຮ້ອງເພງໃຫ້ຈົບຂອງລາວໄດ້ເອົາຊະນະຈິດໃຈຂອງພວກເຂົາ.

ສິ່ງທີ່ຄ້າຍຄືກັນໄດ້ເກີດຂຶ້ນກັບນາຍຮ້ອຍທະຫານທີ່ຢືນຢູ່ໃກ້ພຣະເຢຊູເທິງໄມ້ກາງແຂນ. ໃນຊົ່ວໂມງກ່ອນນັ້ນລາວອາດຈະເປັນນຶ່ງໃນກຸ່ມຄົນທີ່ດູຖູກພຣະເຢຊູວ່າເປັນຄົນຊົ່ວ, ແຕ່ເວລາທະຫານໃຈແຂງຄົນນີ້ໄດ້ເຫັນວິທີທີ່ພຣະເຢຊູຫັນໃຈຄັ້ງສຸດທ້າຍ ການເຂົ້າໃຈກ່ຽວກັບພຣະເຢຊູວ່າເປັນໃຜໄດ້ປ່ຽນລາວຢ່າງໜ້າມືເປັນຫລັງມື. ນາຍທະຫານໄດ້ເຫັນພຣະເຢຊູຊົງຍັງໝັ້ນຄົງສັດຊື່ ແລະຍັງຮັກຈົນເຖິງລົມຫາຍໃຈບາດສຸດທ້າຍ. ເຫດການນີ້ນຳພາໃຫ້ລາວປະກາດຢ່າງສຸດໃຈວ່າ, *"ຈິງແທ້ແລ້ວ, ທ່ານຜູ້ນີ້ແມ່ນພຣະບຸດຂອງພຣະເຈົ້າ!"*

ສິ່ງທີ່ພວກເຮົາເຫັນຢູ່ໄມ້ກາງແຂນສາມາດປ່ຽນພວກເຮົາຄືກັນ ທີ່ໄມ້ກາງແຂນພວກເຮົາເຫັນຄວາມຮັກຂອງພຣະເຈົ້າກຳລັງເກີດຂຶ້ນທີ່ບໍ່ເຄີຍມີມາຈາກບ່ອນອື່ນ. ເວລາພວກເຮົາເຫັນພຣະເຢຊູຊົງໝັ້ນຄົງຈິງຈັງກັບໜ້າທີ່ການໂຜດໂລກຈົນເຖິງລົມຫາຍໃຈບາດສຸດທ້າຍ, ພວກເຮົາກໍເປັນເໝືອນນາຍຮ້ອຍທະຫານນັ້ນ ຕອບຮັບຄວາມຮັກຂອງພຣະອົງດ້ວຍການຍອມສາຣະພາບຮັບວ່າພຣະອົງຊົງເປັນພຣະບຸດຂອງພຣະເຈົ້າ ແລະພຣະຜູ້ໂຜດໃຫ້ພົ້ນຂອງເຮົາ.

ມາຣະໂກໄດ້ປ່ຽນບ່ອນຈາກໂຄລະໂຄທາມາຢູ່ໃນພຣະວິຫານເພື່ອອະທິບາຍເຫດການທີ່ຊ່ວຍໃຫ້ເຮົາເຂົ້າໃຈຈຸດມຸ້ງໝາຍຂອງການຕາຍເທິງໄມ້ກາງແຂນຂອງພຣະເຢຊູສຳເຣັດຜົນສຳລັບຜູ້ທີ່ວາງໃຈເຊື່ອໃນພຣະອົງ. ໃນເວລາດຽວກັນກັບລົມຫາຍໃຈບາດສຸດທ້າຍຂອງພຣະເຢຊູ, ຜ້າກັ້ງໃນພຣະວິຫານກໍຖືກຈີກຕັ້ງແຕ່ເທິງຈົນເຖິງລຸ່ມເປັນສອງຕ່ອນ. ຜ້າກັ້ງຜືນນັ້ນຂັ້ນກາງພຣະວິຫານລະຫວ່າງຫ້ອງສັກສິດບໍຣິສຸດຊຶ່ງເປັນບ່ອນດຽວທີ່ເຊື່ອວ່າພຣະເຈົ້າຊົງສະຖິດຢູ່ແລະຫ້ອງອື່ນ. ມີແຕ່ມະຫາປະໂຣຫິດຄົນດຽວທີ່ສາມາດຜ່ານຜ້າກັ້ງເຂົ້າໄປໃນຫ້ອງສັກສິດແລະຕ້ອງເປັນວັນຊຳຣະລ້າງຄວາມບາບວັນດຽວ.

ເວລາຜ້າກັ້ງຖືກຈີກເຄິ່ງ, ຂໍ້ຄວາມກໍແຈ່ມແຈ້ງຂຶ້ນ: ການຕາຍຂອງພຣະເຢຊູເທິງໄມ້ກາງແຂນໄດ້ທຳລາຍກຳແພງທີ່ຂັ້ນລະຫວ່າງພຣະວິນຍານບໍຣິສຸດກັບມະນຸດຄົນບາບ. ເວລານີ້ຜູ້ທີ່ວາງໃຈເຊື່ອພຣະເຢຊູມີໂອກາດເຂົ້າຫາພຣະເຈົ້າດ້ວຍຕົນເອງ. ຜ້າກັ້ງໄດ້ຖືກຈີກຈາກເທິງຈົນເຖິງລຸ່ມສະແດງໃຫ້ເຫັນວ່າພຣະເຈົ້າຈິງໃຈທຳລາຍກຳແພງທີ່ແຍກພວກເຮົາຈາກພຣະອົງ.

**4. <u>ຢືນຢູ່ຢ່າງມີຊັຍຊະນະ</u>**: ມາຣະໂກ 16:1, 5-7

ພວກຜູ້ຍິງຕ້ອງການສະແດງຄວາມຮັກກັບພຣະເຢຊູດ້ວຍການເອົານ້ຳມັນທາພຣະສົບຂອງພຣະອົງກ່ອນຈະເອົາໄປຝັງ. ເມື່ອວັນຊະບາໂຕຜ່ານໄປ, ພວກເຂົາໄດ້ນຳເອົາເຄື່ອງຫອມມານຳເພື່ອເຂົາຈະໄດ້ໄປແລະເອົາທາສົງພຣະອົງ. ເວລາພວກເຂົ້າໄປໃນອຸບມົງປາກົດວ່າໃນນັ້ນເປົ່າຫວ່າງ ແລະພົບຊາຍໜຸ່ມຄົນນຶ່ງລໍຖ້າພວກເຂົາຢູ່ ພວກເຂົາເຈົ້າກໍເລີຍຕື່ນຕົກໃຈແລະປລາດໃຈ. ຊັຍຊະນະເໜືອຄວາມຕາຍຂອງພຣະເຢຊູເປັນສິ່ງທີ່ຍາກເຫຼືອຫຼາຍກວ່າ ທີ່

ພວກເຂົາຈະຮັບໄດ້ ແລະກໍເປັນການທີ່ໜ້າອັສຈັນໃຈເກີນກວ່າທີ່ເຂົາຫວັງໄວ້. ມີແຕ່ເວລາທີ່ຜູ້ທີ່ບອກຂ່າວດີກ່ຽວກັບສິ່ງທີ່ເກີດຂຶ້ນເທົ່ານັ້ນ ພວກເຂົາຈຶ່ງເລີ້ມເຂົ້າໃຈການຊັຍຊະນະຄວາມຕາຍທີ່ພຣະເຢຊູຊົງໄດ້ທຳໄວ້ເພື່ອພວກເຂົາແລະເພື່ອໝົດທຸກໆຄົນທີ່ພຣະອົງຊົງຮັກ.

ຊັຍຊະນະເໜືອຄວາມຕາຍຂອງພຣະເຢຊູຍັງເປັນການອັສຈັນໃຈ ພວກຄົນທັງຫລາຍເປັນທຸກຕາມຫລຸມຝັງສົບຍ້ອນຄວາມສັມພັນໄດ້ແຕກຫັກ, ຄວາມຝັນຖືກທຳລາຍ, ເປົ້າໝາຍຂອງຊີວິດໝົດໄປ, ແລະການປ່ອຍທາງຈິດວິນຍານ. ຂ່າວທີ່ພຣະເຢຊູໄດ້ຍຶດຄອງຄວາມບາບແລະຄວາມຕາຍເປັນສິ່ງທີ່ໜ້າອັສຈັນທຸກຢ່າງທີ່ພວກເຂົາສາມາດຄຳນຶງເຖິງ. ພຣະຄຣິດຊົງຮຽກເອີ້ນເອົາພວກເຮົາໃຫ້ເປັນຜູ້ສົ່ງຂ່າວ ເພື່ອຊ່ວຍໃຫ້ຄົນເຂົ້າໃຈໃນຊັຍຊະນະທີ່ພຣະອົງຊົງໄດ້ຍຶດເອົາມາແລະຊັຍຊະນະນີ້ມີຄວາມໝາຍຕໍ່ຊີວິດຂອງເຂົາຫລາຍເທົ່າໃດ.

ເທວະດາໄດ້ແນະນຳໃຫ້ພວກຜູ້ຍິງນຳເອົາຂ່າວດີໄປອະທິບາຍໃຫ້ສາວົກຂອງພຣະອົງແລະເປໂຕ. ພວກສາວົກໄດ້ໜີປະພຣະເຢຊູ; ເປໂຕໄດ້ປະຕິເສດວ່າບໍ່ເຄີຍຮູ້ຈັກພຣະອົງ. ພຣະເຈົ້າຊົງຕ້ອງການໃຫ້ພວກເຂົາຮູ້ຈັກ ເຖິງວ່າພວກເຂົາໄດ້ຜິດພາດໄປ, ຊັຍຊະນະຂອງພຣະເຢຊູກໍແມ່ນເພື່ອພວກເຂົາ. ມີຫລາຍຄົນເຊື່ອວ່າການຄືນມາຈາກຕາຍຂອງພຣະເຢຊູເປັນຂ່າວດີແຕ່ບໍ່ແມ່ນສຳລັບພວກເຂົາ. ພວກເຂົາເຊື່ອວ່າຄວາມຜິດພາດຂອງພວກເຂົາເປັນສິ່ງທີ່ຊົ່ວເກີນກວ່າຄວາມຮັກຂອງພຣະຄຣິດຈະຮັບໄດ້. ພວກເຮົາຕ້ອງເຮັດໃຫ້ຂ່າວນີ້ເຂົ້າໃຈງ່າຍຂຶ້ນ--ພຣະເຢຊູໄດ້ຊັຍຊະນະນັ້ນເປັນສິ່ງທີ່ຍິ່ງໃຫຍ່ກວ່າຄວາມບາບຂອງພວກເຮົາ ຊັຍຊະນະຂອງພຣະອົງແມ່ນເປັນຂອງທຸກໆຄົນ.

ຜູ້ສົ່ງຂ່າວໄດ້ປະກາດຄຳສັນຍາຂອງພຣະເຢຊູທີ່ວ່າພຣະອົງຈະຊົງພົບກັບພວກເຂົາທີ່ ຄາລີເລ. ພຣະເຢຊູຍັງຊົງໄດ້ສັນຍາອີກວ່າ ເວລາໃດແລະຢູ່ບ່ອນໃດກໍຕາມທີ່ສາວົກຂອງພຣະອົງເຮັດວຽກການຂອງພຣະອົງ, ພວກເຂົາຕ້ອງປະສົບກັບການສະຖິດນຳ ແລະພະລັງອຳນາດຂອງພຣະອົງ. ພວກເຮົາຝັນຢາກພົບກັບພຣະຄຣິດ, ວັນນຶ່ງພວກເຮົາຈະພົບກັບພຣະອົງດ້ວຍການຢືນຕໍ່ໜ້າພຣະອົງ--ແຕ່ກ່ອນຈະເຖິງວັນນັ້ນ ພຣະອົງໄດ້ຊົງບອກກັບພວກເຮົາເຖິງບ່ອນທີ່ເຮົາສາມາດພົບພຣະອົງ. ພຣະເຢຊູຈະຊົງເຂົ້າຮ່ວມພວກເຮົາໃນສຖານທີ່ທີ່ພວກເຮົາແບ່ງປັນຄວາມຮັກ ແລະ ຂ່າວດີກ່ຽວກັບຊັຍຊະນະຂອງພຣະອົງ.

## ບົດຮຽນຊີວິດ:

ພຣະເຢຊູຊົງບໍ່ໄດ້ຊັຍຊະນະອັນຍິ່ງໃຫຍ່ຢ່າງດຽວ, ພຣະອົງຍັງຊົງຕ້ອງການໃຫ້ພວກເຮົາປະສົບກັບຊັຍຊະນະນີ້ໃນຊີວິດປະຈຳວັນຂອງເຮົາດ້ວຍ ພຣະອົງຕ້ອງການໃຫ້ພວກເຮົາບອກຄົນອື່ນກ່ຽວກັບຊັຍຊະນະຂອງພຣະອົງອີກ.

- ຈົ່ງຢືນໝັ້ນຄົງຢູ່ເພື່ອພຣະອົງ ເຖິງຈະມີອຸປສັກປານໃດກໍຕາມ. ຈົ່ງເປັນພະຍານດ້ວຍການກະທຳແລະວາຈາ.
- ຈົ່ງສ້າງກຸ່ມອຸດໜູນຄຣິສຕຽນດ້ວຍກັນໃຫ້ເຂັ້ມແຂງ, ແຕ່ໃຫ້ຕຽມພ້ອມໃນການຢືນຢູ່ໂດດດ່ຽວເມື່ອເວລາມາເຖິງ. ຄວາມເຊື່ອທີ່ສາມາດຢືນຄົນດຽວໄດ້ ກໍສາມາດຢືນສູ້ໄດ້ຫລາຍຢ່າງ.
- ຈົ່ງເພ່ງເບິ່ງກາງແຂນດ້ວຍການອັສຈັນໃຈ. ເວລາທີ່ສົງສັຍຄວາມຮັກຂອງພຣະເຈົ້າ ຈົ່ງໃຫ້ພຣະຄຳຂອງພຣະອົງນຳທ່ານໄປຢູ່ຕີນໄມ້ກາງແຂນ ເພື່ອທ່ານຈະເຫັນພຣະເຢຊູຢ່າງແທ້ຈິງແລະຮູ້ວ່າພຣະເຢຊູຮັກທ່ານເທົ່າໃດ.
- ຈົ່ງສເລີມສລອງຊັຍຊະນະເໜືອຄວາມຕາຍຂອງພຣະເຢຊູ. ໃຫ້ຮູ້ວ່າພະລັງອຳນາດດຽວກັນທີ່ນຳພຣະອົງອອກຈາກຫລຸມຝັງສົບແຕ່ສມັຍກ່ອນສາມາດນຳທ່ານອອກຈາກຫລຸມຄວາມຕາຍແລະບາບ ແລະເຮັດໃຫ້ທ່ານເປັນບຸດຂອງພຣະອົງວັນນີ້ແລະຕລອດໄປ. ຈົ່ງບອກຂ່າວໃຫ້ທຸກໆຄົນຟັງທັງໃກ້ແລະໄກຈົນທົ່ວໂລກ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ໂດຍ BS